# ບົດທີ 6

# ກິດຈະການຂອງພວກອັກຄະສາວົກ

## ໂຄງຮ່າງ ແລະ ຜູ້ລາຍງານ




**1** ກ. ໃນບົດຮຽນທີ 5 ນັ້ນ ເຮົາຮຽນຮູ້ແລ້ວວ່າ ການປ່າວປະກາດຂອງພະເຢຊູບໍ່ສິ້ນສຸດກັບມັດທາຍບົດທີ 28. ຕັ້ງແຕ່ວັນ ເພັນເຕຄໍສະເຕຕໍ່ມາເຖິງປະຈຸບັນນີ້ ພວກຄຣິດສະຕຽນຍັງປ່າວປະກາດໂດຍອຳນາດໃດ? ____________________________________________

ຂ. ພະທຳໃດທີ່ລາຍງານເລື່ອງການປ່າວປະກາດພະທຳຫຼັງຈາກພະເຢຊູຄືນພະຊົນ?

____________________________________________________________

**2** ບົດຮຽນນີ້ຈະແນະນຳພະທຳ ກິດຈະການ.

ກ. ເທື່ອສຸດທ້າຍທີ່ພະເຢຊູປາກົດຕໍ່ພວກລູກສິດຂອງພະອົງຄືໃນເຫດການໃດ?

____________________________________________________________

ຂ. ໃຫ້ອ່ານເລື່ອງເຫດການນັ້ນໃນ ກຈກ 1:6-11 ຂໍ້ໃດອ້າງເຖິງພະລາຊະທານລິດເດດຂອງພະວິນຍານ?______________________________________________________

*ໃຈຄວາມສຳຄັນຂອງພະທຳກິດຈະການຢູ່ໃນ ກຈກ 1:8.*

- *ຂໍ້ພະຄຳພີທີ່ແບ່ງການປ່າວປະກາດເປັນ 3 ຂອບເຂດ ເຊັ່ນດຽວກັນ ທັງພະທຳກິດຈະການ ແບ່ງການປ່າວ ປະກາດເປັນ 3 ຂອບເຂດດ້ວຍ.*
- *ແລະອີກ ມີສອງຄວາມໃນ ກິດຈະການ 1:8 ທີ່ ສະຫລູບເລື່ອງການປ່າວປະກາດຄືຄຳວ່າ "ພະວິນຍານບໍລິສຸດ" ແລະ "ພະຍານ".*

## ກິດຈະການ 1:8 ຂອບເຂດປ່າວປະກາດ

**3** ການປ່າວປະກາດຂ່າວປະເສີດໃນພະທຳກິດຈະການແບ່ງເປັນ 3 ຂອບເຂດ ຕາມແຜນທີ່ 3 ໃບຕາມທີ່ເຫັນຢູ່ໜ້າປົກ ບົດທີ 6 ນີ້.

ກ. ໃນ ກຈກ 1:8 ເຫັນວ່າຄຼິດສະຕະຈັກເລີ້ມຕົ້ນໃນກຸງໃດ? ____________________

ຕາມແຜນທີ່ໃດໜ້າປົກບົດນີ້? ____________________

ຂ. ແຜ່ອອກໄປເຖິງສອງແຂວງໃດ? ____________________

ຕາມແຜນທີ່ໃດ? ____________________

ຄ. ສຸດທ້າຍໄປເຖິງໃສ? ____________________

ຕາມແຜນທີ່ໃດ? ____________________

**4** ກ. ໃນພະທຳກິດຈະການ ການແຜ່ອອກຂອງຂ່າວປະເສີດແບ່ງເປັນຈັກພາກ? __________

ຂ. ສະເພາະໃນ ກຈກ 1:8 ແບ່ງເປັນຈັກພາກ? ____________________

**5** ກ. ຂອບເຂດໃດກ່ອນ? ____________________

ຂ. ຂອບເຂດໃດທີສອງ? ____________________ ແລະ ____________________

ຄ. ແລະສຸດທ້າຍເຖິງໃສ? ____________________

**6** ໃຫ້ອ່ານ ກິດຈະການ ບົດທີ 1

ກ. ໃນ ກຈກ 1:4 ພະເຢຊູໃຫ້ເຂົາຄອຍຖ້າພະວິນຍານຢູ່ບ່ອນໃດ? ____________________

ຂ. ໃນ ກຈກ 1:12 ພວກສາວົກກັບຄືນໄປໃສ? ____________________

ຄ. ການປ່າວປະກາດຂ່າວປະເສີດໃນກຸງເຢລູຊາເລັມເລີ້ມຕົ້ນກັບບົດໃດ? ____________

| ໃຫ້ຂຽນຄຳວ່າ “ເຢລູຊາເລັມ” ກ່ອນ ກຈກ 1:1 |
|---|

**7** ກ. ໃຫ້ອ່ານ ກຈກ 8:1 ພວກລູກສິດເວັ້ນແຕ່ພວກອັກຄະສາວົກ ແຕກກະຈັດກະຈາຍໄປ ຍ້ອນຫຍັງ? ____________________

ຂ. ກະຈັດກະຈາຍໄປສອງແຂວງໃດ? ______________ ແລະ ______________

ຄ. ໃນ ກຈກ 8:4 ເຫັນວ່າຜູ້ທີ່ແຕກກະຈັດຈາຍໄປນັ້ນພາກັນເຮັດຫຍັງ? ____________

ງ. ການນັ້ນສະແດງການເລີ້ມຕົ້ນຂອງພາກທີສອງ. ການເລີ້ມຕົ້ນຂອງຄຼິດສະຕະຈັກໃນ ແຂວງ ຢູດາແລະຊາມາເລຍ ຕັ້ງ ມາແຕ່ກິດຈະການ ບົດໃດ? ____________________

| ໃຫ້ຂຽນຄຳວ່າ “ຢູດາ ແລະ ຊາມາເລຍ” ກ່ອນ ກຈກ 8:1 |
|---|

**8** ໃຫ້ອ່ານ ກຈກ 13:1-4 ຂໍ້ພະຄຳພີເຫຼົ່ານັ້ນ ການຄັດເອົາຜູ້ປ່າວປະກາດຂ່າວປະເສີດສອງຄົນ. ພະເຈົ້າໃຊ້ສອງຄົນນັ້ນ ໃນການແຜ່ຂ່າວປະເສີດອອກຢ່າງບໍ່ຈຳກັດ.

ກ. ໃນ ກຈກ 13:1 ເຫັນວ່າ ແມ່ນຄຼິດສະຕະຈັກເມືອງໃດຊິງໃຊ້ເຂົາໄປ? ____________

ຂ. ສອງຄົນນັ້ນຊື່ຫຍັງ? ____________________

ຄ. ໃຫ້ອ່ານ ກຈກ 13:9 ໂຊໂລນັ້ນມີອີກຊື່ໜຶ່ງຊື່ຫຍັງ? _______________________

ງ. ໃນ ກຈກ 13:4 ເຂົາໄປທາງບົກຫຼືທາງເຮືອ? ___________________________

| ໃຫ້ຂຽນຄຳວ່າ "ທີ່ສຸດປາຍແຜ່ນດິນໂລກ" ກ່ອນ ກຈກ 13:1 |
|---|

**9** ໃນບົດທີ 13 ນີ້ເຮົາຮຽນມາເຖິງຂອບເຂດທີ 3 ໃນການຂະຫຍາຍຄຼິດສະຕະຈັກຕາມພະທຳກິດຈະການ ຄືທີ່ສຸດ ແຜ່ນດິນໂລກປະກອບໂດຍທຸກຊາດທຸກພາສາ.

ກ. ການຂະຫຍາຍຄຼິດສະຕະຈັກເຖິງເຂບເຂດທີ 3 ນີ້ ເລີ້ມຕົ້ນໃນພະທຳກິດຈະການບົດໃດ?

___________________________________________________________

ຂ. ສິ້ນສຸດລົງກັບພະທຳກິດຈະການບົດໃດ? (ເບິ່ງໃນພະຄຳພີກໍໄດ້) _______________

ຄ. ໃນ ກຈກ ບົດ 28 ນັ້ນ ອາຈານ ໂປໂລໄປເຖິງກຸງໃດ? _____________________

**10** ໃຫ້ເຮົາຮຽນຄືນກ່ອນ:

ກ. ການປ່າວປະກາດໃນຂອບເຂດທຳອິດ ເລີ້ມຕົ້ນໃນ ກິດຈະການ ບົດໃດ? __________

ຈົບລົງກັບບົດໃດ? _________________________________________

ຂ. ຂອບເຂດທີສອງຕັ້ງຕົ້ນກັບບົດໃດ? ____________ ຈົບລົງກັບບົດໃດ? _________

ຄ. ຂອບເຂດທີສາມເລີ້ມຕົ້ນກັບບົດໃດ?____________ ຈົບລົງກັບບົດໃດ _________

**11** ມີຂໍ້ພະທຳທີ່ສະຫລູບເລື່ອງການປ່າວປະກາດໃນ 3 ຂອບເຂດ. ຂໍ້ນັ້ນຢູ່ໃນ ກິດຈະການບົດ ແລະຂໍ້ໃດ? ____________________________________________

| ໃຫ້ທ່ານເອົາສໍສີຟ້າຂີດກ້ອງຄຳ "ກຸງເຢລູຊາເລັມ" "ແຂວງຢູດາ ກັບແຂວງຊາມາເລຍ" ແລະ "ທີ່ສຸດປາຍແຜ່ນດິນໂລກ" ໃນ ກຈກ 1:8 ນັ້ນ. |
|---|

*ເຫັນວ່າ ກຈກ 1:8 ນັ້ນສະຫລູບເລື່ອງໃນພະທຳ ກິດຈະການ ກໍວ່າໄດ້. ດັ່ງນັ້ນ ເຮົາຖືວ່າເປັນຂໍ້ສຳຄັນທີ່ສຸດໃນພະທຳກິດຈະການ.*

**12** ກ. ຂອບເຂດທຳອິດຄືກຸງໃດ? ___________________________________

ບັນທຶກໄວ້ໃນກິດຈະການບົດໃດແດ່? _____________________________

ຂ. ຂອບເຂດທີສອງຄືແຂວງໃດແດ່? ______________________________

ບັນທຶກໄວ້ໃນບົດໃດແດ່? ___________________________________

ຄ. ຂອບເຂດທີ 3 ເດ? _______________________________________

ໃນບົດໃດແດ່? ___________________________________________

**13** ກ. ຄຼິດສະຕະຈັກທ້ອງຖິ່ນໃດບັນທຶກໄວ້ໃນ ກຈກ 1 ເຖິງ 7? __________________

ຂ. ຄຼິດສະຕະຈັກໃດໃນບົດສຸດທ້າຍຂອງກິດຈະການ? ____________________

| |
|---|
| ເຫັນວ່າ ກຈກ 1:8 ເປັນຂໍ້ສຳຄັນໃນພະທຳ ກິດຈະການ.<br>ດັ່ງນັ້ນ ໃຫ້ທ່ານທ່ອງຂຶ້ນໃຈຂໍ້ນັ້ນກ່ອນ. |

*ກຈກ 1:8 ນັ້ນເປັນຂໍ້ສຳຄັນເພາະສອງເຫດຄື:*

- *ແບ່ງການປ່າວປະກາດພະທຳເປັນ 3 ຂອບເຂດ.*
- *ຍົກສະເໜີສັບສຳຄັນສອງຄວາມ.*

## ກິດຈະການ 1:8 ສັບສຳຄັນສອງຄວາມ

**14** ສັບສຳຄັນຄວາມທຳອິດນັ້ນ ປາກົດມາ 50 ກວ່າເທື່ອໃນ ພະທຳກິດຈະການ.
ໃຫ້ທ່ານອ່ານ ກຈກ 1 ຂໍ້ 2, 5, 8, ແລະ 16.
ກ. ແມ່ນອີງໃດທີ່ປາກົດມາໃນທຸກຂໍ້ນັ້ນ? ____________________
ນັ້ນແຫຼະ, ສັບສຳຄັນຄວາມໜຶ່ງ.
ຂ. ສັບສຳຄັນອີກຄວາມໜຶ່ງ ປາກົດມາ 20 ກວ່າເທື່ອໃນພະທຳ ກິດຈະການ.
ໃຫ້ທ່ານເປີດອ່ານ ກຈກ 1:8, 1:22, 2:32, 3:15, ແລະ 5:32.
ສັບທີ່ເຫັນໃນທຸກຂໍ້ນັ້ນຄືສັບໃດ? ____________________

| |
|---|
| ໃຫ້ທ່ານຂີດສີຟ້າອ້ອມຄຳ “ພະວິນຍານບໍລິສຸດ” ແລະຄຳ “ພະຍານ” ໃນ ກຈກ 1:8. |

**15** ມີສາເຫດສອງປະການທີ່ ກຈກ 1:8 ເປັນຂໍ້ສຳຄັນໃນພະທຳກິດຈະການຄື: (ຕື່ມຄວາມທີ່ຂາດ)
ກ. ເພາະຍົກສະເໜີສາມ ____________ ທີ່ລູກສິດຂອງພະອົງຈະປ່າວປະກາດ.
ຂ. ເພາະຍົກ ____________________ ສອງຄວາມ.

**16** ການປ່າວປະກາດໃນພະທຳກິດຈະການ ແບ່ງເປັນຈັກສ່ວນ? ____________

**17** ໃຫ້ທ່ານຈົດທັງ 3 ສ່ວນແລະບົດທີ່ບັນທຶກສ່ວນນັ້ນໄວ້.
ກ. ____________________ ໃນບົດໃດແດ່ ____________
ຂ. ____________________ ໃນບົດໃດແດ່ ____________
ຄ. ____________________ ໃນບົດໃດແດ່ ____________

**18** ກ. ປະຫວັດຂອງຄຼິດສະຕະຈັກໃນພະທຳກິດຈະການ ເລີ້ມຕົ້ນກັບຄຼິດສະຕະຈັກໃນກຸງໃດ?
____________________________________
ຂ. ພະທຳກິດຈະການສິ້ນສຸດລົງກັບຄຼິດສະຕະຈັກໃນກຸງໃດ? ____________

**19** ກ. ຂໍ້ສຳຄັນໃນພະທຳກິດຈະການຄືບົດແລະຂໍ້ໃດ? ____________

ຂ. ທ່ານທ່ອງຂຶ້ນໃຈຂໍ້ນັ້ນແລ້ວ ໃຫ້ຂຽນລົງຊ່ອງຫວ່າງຕໍ່ໄປນີ້: (ຢ່າເບິ່ງເນີ!)

____________________________________________________________

____________________________________________________________

____________________________________________________________

____________________________________________________________

ຄ. ເຮົາຖືວ່າ ກຈກ 1:8 ນັ້ນເປັນຂໍ້ສຳຄັນທີ່ສຸດໃນພະທຳກິດຈະການເພາະສອງເຫດໃດ?

____________________________________________________________

ງ. ສັບສຳຄັນໃນພະທຳກິດຈະການສອງຄວາມຄືຄວາມໃດ?________________________
ແລະ ________________________________________________________

**20** ມາເຖິງທຸກວັນນີ້ ການປ່າວປະກາດພະທຳຍັງຂຶ້ນຢູ່ກັບອຳນາດຂອງພະວິນຍານບໍລິສຸດ ໃນຊີວິດຂອງພວກພະຍານ.

ກ. ໃນ ກຈກ 2:38 ແລະ 41 ແມ່ນໃຜເປັນພະຍານທີ່ເປີດປ່າວປະກາດ ຂ່າວປະເສີດໃຫ້ຊາດຢິວຟັງ? ______________

ຂ. ໃນ ກຈກ 10:44-45 ແມ່ນໃຜເປີດໃຫ້ຄົນຕ່າງຊາດຟັງພະທຳ? ________________________________________

ຄ. ໃນ ມທ 16:19 ທີ່ທ່ານຮຽນມາແລ້ວ ພະເຢຊູມອບຂໍກະແຈໄວ້ໃຫ້ໃຜ? ___________________________________



ເຫັນວ່າ ພະເຢຊູມອບພາລະນັ້ນໄວ້ໃຫ້ເປໂຕເປີດປ່າວປະກາດໃຫ້ທັງຊາດຢິວແລະຄົນຕ່າງຊາດດ້ວຍ.

**21** ຕັ້ງແຕ່ ກຈກ ບົດທີ 1 ຕະຫຼອດເຖິງບົດທີ 12 ມີພະຍານຫຼາຍຄົນອອກໄປປ່າວປະກາດຄື: ໂຢຮັນ, ຊະເຕຟາໂນ, ຟີລິບ, ໂປໂລ ໆລໆ ເປັນຕົ້ນ. ເຫັນວ່າມີຜູ້ໜຶ່ງປ່າວປະກາດຫຼາຍກວ່າໝູ່ໃນສອງຂອບເຂດນັ້ນ. ຄົນນັ້ນຄືໃຜ? _________________________________________

**22** ສ່ວນຂອບເຂດທີສາມໃນ ກິດຈະການ 13:28 ທີ່ບັນທຶກເລື່ອງການຂະຫຍາຍຄຼິດສະຕະຈັກເຖິງທີ່ສຸດແຜ່ນດິນໂລກ. ເຫັນພະຍານອີກຄົນໜຶ່ງທີ່ຖືກສົ່ງໄປກຸງໂລມເປັນນັກໂທດ. ເພິ່ນຊື່ຫຍັງ? ________________________________________________________

**23** ພະທຳກິດຈະການລາຍງານເລື່ອງການປ່າວປະກາດພະທຳຂອງສອງຄົນເປັນຕົ້ນ.

ກ. ຈາກກິດຈະການ ບົດ 1-12 ເນັ້ນຄຳການປະກາດຂອງພະຍານໃດ? ______________

ຂ. ຈາກບົດ 13-28 ເດ? __________________________________________________

**24** ແຕ່ວ່າຍັງມີພະຍານອີກຄົນໜຶ່ງຄື ຜູ້ບັນທຶກພະທຳກິດຈະການ. ບໍ່ເຫັນຊື່ຂອງເພິ່ນໃນກິດຈະການຈັກເທື່ອ ແຕ່ເຫັນວ່າ ເພິ່ນຢູ່ຮ່ວມກັບໂປໂລໃນການປ່າວປະກາດ ບໍ່ເຫັນບອກຊື່ຂອງຜູ້ລາຍງານນັ້ນ. ດັ່ງນັ້ນ ຖ້າເຮົາຈະຮູ້ ເຮົາຈຳເປັນ ຕ້ອງຄົ້ນຄວ້າກ່ອນ.

ກ. ໃນ ກຈກ 1:1 ເຫັນວ່າພະທຳ ກິດຈະການຂຽນໄປຍັງໃຜ? ______________________

ຂ. ຜູ້ບັນທຶກກິດຈະການນີ້ ຂຽນໜັງສືເຫຼັ້ມກ່ອນດ້ວຍບໍ່? ________________________

ຄ. ຕາມ ກຈກ 1:1 ນັ້ນ ເຫຼັ້ມຕົ້ນກ່າວເລື່ອງຫຍັງ? ____________________________

_________________________________________________________________

ງ. ແມ່ນ 4 ເຫຼັ້ມໃດໃນພະຄຳພີໃໝ່ທີ່ກ່າວເລື່ອງປະຫວັດຊີວິດພະເຢຊູ? ______________

_________________________________________________________________

ຈ. ດັ່ງນັ້ນ ອາດຈະແມ່ນວ່າ ພະທຳກິດຈະການບັນທຶກຕໍ່ຈາກ ___________ ເຫຼັ້ມໜຶ່ງ. (ຕື່ມ)

**25** ໃຫ້ທ່ານອ່ານເບິ່ງໃນຄຳແນະນຳຂອງຂ່າວປະເສີດທັງ 4 ເຫຼັ້ມນີ້ເບິ່ງວ່າ ມີເຫຼັ້ມໃດທີ່ຂຽນໄປຍັງທ່ານເທໂອຟີໂອບໍ່? (ໃຫ້ໝາຍອັນທີ່ຖືກ)

_____ ມທ 1:3 _____ ມລກ 1:1 _____ ລກ 1:3 _____ ຢຮ 1:1

**26** ກ. ດັ່ງນັ້ນ ຜູ້ບັນທຶກພະທຳ ກິດຈະການ ເປັນຄົນດຽວທີ່ບັນທຶກຂ່າວປະເສີດເຫຼັ້ມທີ 3 ຄືຂ່າວປະເສີດໃດ? ________________________________________________

ຂ. ທັງຂ່າວປະເສີດລູກາ ພະທຳກິດຈະການຂຽນໄປຍັງໃຜ? _______________________

**27** ດັ່ງນັ້ນ ເຮົາລົງຄວາມເຫັນໄດ້ວ່າ ໃຜແຕ່ງພະທຳກິດຈະການ? ____________________

**28** ກ. ແມ່ນຂໍ້ໃດໃນ ລູກາບົດທີ 1 ທີ່ເປັນຫຼັກຖານວ່າ ລູກາຂຽນຂ່າວປະເສີດນັ້ນຍັງທ່ານເທໂອຟີໂລ?_____________________________________________

ຂ. ຂໍ້ໃດໃນ ກິດຈະການບົດທີ 1? ___________________________________________

**29** ອາຈານໂປໂລເຄີຍຮ່ວມກັບ ລູກາໃນການປ່າວປະກາດ ແລະຖືວ່າເປັນພີ່ນ້ອງກັນໃນຄອບຄົວຂອງພະເຈົ້າ.

ກ. ໃນ ໂກໂລຊາຍ 4:14 ໂປໂລ ບອກວ່າ ລູກາມີອາຊີບໃດ? ______________________

ຂ. ໃນ ຟີເລໂມນ ຂໍ້ 24 ເຫັນວ່າມີຄວາມສຳພັນຢ່າງໃດລະຫວ່າງໂປໂລກັບ ລູກາ?

_________________________________________________________________

**30** ໃຫ້ອ່ານ ກິດຈະການ 16:10. ເຫັນວ່າ ລູກາທີ່ບັນທຶກເລື່ອງການເດີນທາງໄປປ່າວປະກາດວ່າ "ພວກເຮົາຈິ່ງພະຍາຍາມ ທັນທີທີ່ຈະອອກໄປເຖິງ ເມືອງມາເກໂດເນຍ".
ຄຳວ່າ "ພວກເຮົາ" ນັ້ນສະແດງວ່າຢ່າງໃດ? (ເລືອກ)

ກ. ______ ຜູ້ບັນທຶກຢູ່ຮ່ວມກັບໂປໂລ.

ຂ. ______ ມີແຕ່ຄົນດຽວໄປ.

ຄ. ______ ລູກາໄປມາເກໂດເນຍກ່ອນ.

**31** ໃຫ້ທ່ານອ່ານຂໍ້ພະຄຳພີຕໍ່ໄປນີ້. ໃຫ້ໝາຍຂໍ້ໃດທີ່ມີຄຳວ່າ "ພວກເຮົາ" ທີ່ສະແດງວ່າລູກາຢູ່ນຳ?

ກ. _______ ກຈກ 16:10 ຂ. _______ ກຈກ 17:1 ຄ. _______ ກຈກ 20:6

ງ. _______ ກຈກ 21:17 ຈ. _______ ກຈກ 27:2 ສ. _______ ກຈກ 28:16

**32** ບໍ່ເຫັນອ້າງເຖິງຊື່ຂອງລູກາຈັກເທື່ອໃນການໄປປ່າວປະກາດ. ເຫັນແຕ່ໃຊ້ສັບວ່າ "ພວກເຮົາ" ຢູ່ສະເໝີ. ໃຫ້ອ່ານ ກຈກ 16:12.

ກ. ເຫັນຄຳວ່າ "ພວກເຮົາ" ໃນຂໍ້ນັ້ນບໍ່? ________________________________

ຂ. ສະແດງວ່າ ໃຜຢູ່ກັບໂປໂລ? ________________________________

ຄ. ເຂົາທັງສອງໄປເມືອງໃດໃນເຂດມາເກໂດເນຍ? ________________________

**33** ເຫັນເພິ່ນໃຊ້ຄຳ "ພວກເຮົາ" ຕັ້ງແຕ່ ກຈກ 16:10 ມາ ສະແດງວ່າ ລູກາຢູ່ດ້ວຍກັນກັບໂປໂລກ່ອນໄປເມືອງໃດໃນເຂດ ມາເກໂດເນຍ? ____________________________

**34** ໃຫ້ອ່ານ ກິດຈະການ 17:1

ກ. ໃນຂໍ້ນັ້ນເຫັນຄຳວ່າ "ພວກເຮົາ" ບໍ່? ________________________________

ຂ. ເຫັນຄຳວ່າ "ທ່ານທັງສອງ" ອ້າງເຖິງໂປໂລກັບຊີລາ (ກຈກ 16:25). ຕອນນັ້ນ ລູກາຢູ່ກັບເຂົາບໍ່? ____________________________________________

ຄ. ປາກົດວ່າ ເມື່ອຈະຂຶ້ນທາງໄປເທຊະໂລນິກ ໂປໂລກັບຊີລາ ປະຄົນໄວ້ໃຫ້ຊ່ອຍຄຼິດສະຕະຈັກໃນ ເມືອງຟີລິບປອຍ ຄືປະໃຜໄວ້? ____________________________

**35** ຕັ້ງແຕ່ ກຈກ ບົດທີ 17 ຕໍ່ໄປ ບໍ່ເຫັນໃສ່ຄຳ "ພວກເຮົາ" ອີກ. ປາກົດວ່າ ລູກາບໍ່ຢູ່ກັບເຂົາແລ້ວເພາະເພິ່ນຍັງ ຢູ່ຊ່ອຍຄຼິດ ສະຕະຈັກໃດ?____________________________

**36** ຕໍ່ໄປໂປໂລກັບມາເຖິງຟີລິບປອຍ ແລ້ວຮ່ວມກັບລູກາອີກ. ຕັ້ງແຕ່ ກຈກ 20:6 ຕໍ່ໄປເຫັນເພິ່ນຍົກຄຳ "ພວກເຮົາ" ມາ ໃຊ້ອີກ.

ກ. ໃນ ກຈກ 20:6 ເຫັນເພິ່ນອອກຈາກເມືອງໃດໄປ? ________________________

ຂ. ມີຄຳໃດເປັນຫຼັກຖານວ່າ ລູກາຢູ່ນຳອີກ? ____________________________

**37** ພະຄຳພີບໍ່ໄດ້ບອກຕາຍຕົວກໍຕາມ ແຕ່ເຫັນມີຫຼັກຖານວ່າ ລູກາບໍ່ໄດ້ໄປເມືອງເທຊະໂລນິກກັບໂປໂລ ລູກາຢູ່ຊ່ອຍໃນ ຄຼິດສະຕະຈັກໃດ? ______________________________

**38** ອາຈານໂປໂລຕັ້ງຄຼິດສະຕະຈັກໄວ້ຫຼາຍບ່ອນ ແຕ່ເບິ່ງຄືວ່າ ຄຼິດສະຕະຈັກໃນເມືອງຟີລິບປອຍຈະເລີນກວ່າໝູ່ຢ້ານວິນ ຍານ. ການນັ້ນອາດຈະເປັນຜົນຮັບຈາກການສອນຂອງຄົນທີ່ຢູ່ກັບເຂົາ ສອນເຂົາໃນເວລາອາຈານໂປໂລໄປ ປ່າວ ປະກາດກັບຊີລາ.

ກ. ໃນເມື່ອໂປໂລໄປແລ້ວ ຜູ້ທີ່ຢູ່ຟີລິບປອຍຄືໃຜ? __________________________

ຂ. ແຕ່ເຖິງຢ່າງນັ້ນກໍຕາມ ເຫັນມີຊື່ຂອງ ລູກາໃນພະທຳກິດຈະການຈັກເທື່ອ? (ເລືອກ)

______ ຫຼາຍເທື່ອ ______ ບໍ່ມີຈັກເທື່ອ ______ ແຕ່ 3 ເທື່ອ

**39** ຕໍ່ໄປອາຈານໂປໂລກັບເມືອເຢລູຊາເລັມ

ກ. ຕາມໃນ ກຈກ 21:17 ລູກາຢູ່ນຳບໍ່? ________________________________

ຂ. ຮູ້ໄດ້ຢ່າງໃດ? ____________________________________________

**40** ຕໍ່ໄປໂປໂລຖືກຂັງໄວ້ ແລ້ວຖືກສົ່ງໄປສານໃນກຸງໂລມ.

ກ. ໃຫ້ອ່ານ ກຈກ 28:16 ລູກາຍັງຢູ່ນຳບໍ່? ________________________________

ຂ. ຮູ້ໄດ້ຢ່າງໃດ? ________________________________________________

**41** ບັດນີ້ ເຮົາຈະຮຽນຄືນອີກ.

ກ. ລູກາຢູ່ໃນເມືອງໃດໃນເມື່ອອາຈານໂປໂລອອກໄປປ່າວປະກາດ? ______________

ຂ. ນອກຈາກເວລາທີ່ເຂົາແຍກກັນນັ້ນ ລູກາເດີນທາງກັບໂປໂລຕະຫຼອດຕັ້ງແຕ່ມາຮອດເມືອງ ______________ ຈົນເຖິງກຸງ __________________________ . (ຕື່ມຄວາມຂາດ)

ຄ. ເລື່ອງນັ້ນເຮົາຮູ້ໄດ້ຢ່າງໃດ? ______________________________________

**42** ກ. ເຫັນຍົກຊື່ຂອງ ລູກາຈັກເທື່ອໃນພະທຳກິດຈະການ? ______________________

ຂ. ເພິ່ນມີອາຊີບຫຍັງ? ______________________________________________

ໃຫ້ທ່ານຕຽມຕົວແລກປ່ຽນຄວາມຄິດເຫັນກັບໝູ່ໃນປະຊຸມຂ້າງໜ້າ ເລື່ອງດັ່ງຕໍ່ໄປນີ້:

* ໃນເມື່ອເຫດສະໜາທ່ານເຄີຍອວດຕົວເລື້ອຍບໍ່ ສົມຄວນທີ່ຈະຖະຫວາຍກຽດໃຫ້ພະເຈົ້າຢ່າງດຽວ.
* ເຫັນຕົວຢ່າງຂອງລູກາທີ່ເພິ່ນບໍ່ຍົກຊື່ຂອງຕົນເອງມາຈັກເທື່ອໃນພະທຳກິດຈະການ. ເພິ່ນມີແຕ່ເປັນພະຍານຝ່າຍພະເຢຊູ ໂດຍບໍ່ໄດ້ອ້າງເຖິງຕົນເອງຈັກເທື່ອ.

**43** ມີຂໍ້ພະຄຳພີຂໍ້ໜຶ່ງທີ່ທ່ານທ່ອງຂຶ້ນໃຈແລ້ວເຊິ່ງສະຫລູບເລື່ອງການປ່າວປະກາດໃນ 3 ຂອບເຂດ. ຖືວ່າເປັນຂໍ້ສຳຄັນ ທີ່ສຸດໃນພະທຳກິດຈະການ. ໃຫ້ທ່ານຈົດຂໍ້ນັ້ນໄວ້ທັງບົດແລະຂໍ້ດ້ວຍ.

________________________________________________________________

________________________________________________________________

________________________________________________________________

________________________________________________________________

________________________________________________________________



**ຄຳຕອບ:**

**1** *ກ. ອຳນາດຂອງພະວິນຍານບໍລິສຸດ ຂ. ຕໍ່ກິດຈະການ*

**2** *ກ. ການສະເດັດສູ່ສະຫວັນ ຂ. ກຈກ 1:8*

**3** *ກ. ເຢລູຊາເລັມ; ກ ຂ. ຢູດາແລະຊາມາເລຍ; ຂ ຄ. ທີ່ສຸດປາຍແຜ່ນດິນໂລກ; ຄ*

**4** *ກ. 3 ຂ. 3 ຄ. ບົດ 1*

**5** *ກ. ກຸງເຢລູຊາເລັມ ຂ. ແຂວງຢູດາ ແລະຊາມາເລຍ*
*ຄ. ທີ່ສຸດປາຍແຜ່ນດິນໂລກ*

**6** *ກ. ເຢລູຊາເລັມ ຂ. ເຢລູຊາເລັມ*

**7** *ກ. ການຂົ່ມເຫັງ ຂ. ຢູດາ ແລະ ຊາມາເລຍ ຄ. ປະກາດຂ່າວປະເສີດ*
*ງ. ບົດ 8*

**8** *ກ. ອັນຕີໂອເຂຍ ຂ. ບາລະນາບາ ແລະ ໂຊໂລ ຄ. ໂປໂລ ງ. ເຮືອ*

**9** *ກ. 13 ຂ. 28 ຄ. ໂລມ*

**10** *ກ. 1; 7 ຂ. 8; 12 ຄ. 13; 28*

**11** *ກຈກ 1:8*

**12** *ກ. ເຢລູຊາເລັມ 1 - 7 ຂ. ຢູດາ ແລະ ຊາມາເລຍ 8 - 12*
*ຄ. ທີ່ສຸດປາຍແຜ່ນດິນໂລກ 13 - 28*

**13** *ກ. ເຢລູຊາເລັມ ຂ. ໂລມ*

**14** *ກ. ພະວິນຍານບໍລິສຸດ ຂ. ພະຍານ*

**15** *ກ. ຂອບເຂດ ຂ. ສັບສຳຄັນ*

**16** *3*

**17** *ກ. ກຸງເຢລູຊາເລັມ 1 - 7 ຂ. ແຂວງຢູດາ ແລະ ຊາມາເລຍ 8 - 12*
*ຄ. ທີ່ສຸດປາຍແຜ່ນດິນໂລກ 13 - 28*

**18** *ກ. ເຢລູຊາເລັມ ຂ. ໂລມ*

**19** *ກ. ກຈກ 1:8 ຂ. (ໃຫ້ກວດເບິ່ງຈາກພະຄຳພີ)*
*ຄ. ທີ່ສະເໜີ 3 ຂອບເຂດໃນການປ່າວປະກາດ ແລະ ທີ່ຍົກສະເໜີສັບສຳຄັນສອງຄວາມ*
*ງ. ພະວິນຍານບໍລິສຸດ ແລະ ພະຍານ*

**20** *ກ. ເປໂຕ ຂ. ເປໂຕ ຄ. ເປໂຕ*

**21** *ເປໂຕ*

**22** *ໂປໂລ*

**23** *ກ. ເປໂຕ ຂ. ໂປໂລ*

**24** *ກ. ທ່ານເທໂອຟີໂລ ຄ. ສິ່ງທີ່ພະເຢຊູໄດ້ຊົງຕັ້ງຕົນກະທຳແລະສັ່ງສອນ ຂ. ຊຽນ*
*ງ. ຂ່າວປະເສີດທັງ 4 ເຫຼັ້ມ ຈ. ຂ່າວປະເສີດ (ມັດທາຍ, ມາລະໂກ, ລູກາ ແລະ ໂຢຮັນ)*

**25** *ລູກາ 1:3 ຖືກ*

**ຄຳຕອບ (ຕໍ່):**

**26** *ກ. ລູກາ ຂ. ທ່ານເທໂອຟີໂລ*

**27** *ລູກາ*

**28** *ກ. ຂໍ້ 3 ຂ. ຂໍ້ 1*

**29** *ກ. ໝໍຢາ ຂ. ເປັນເພື່ອນຮ່ວມງານ*

**30** *ກ ຖືກ*

**31** *ກ ຄ ງ ຈ ສ ຖືກ*

**32** *ກ. ເຫັນ ຂ. ລູກາ (ຜູ້ບັນທຶກ) ຄ. ເມືອງຟີລິບປອຍ*

**33** *ຟີລິບປອຍ*

**34** *ກ. ບໍ່ເຫັນ ຂ. ບໍ່ຢູ່ ຄ. ລູກາ*

**35** *ຟີລິບປອຍ*

**36** *ກ. ຟີລິບປອຍ ຂ. ຄຳວ່າ "ພວກເຮົາ"*

**37** *ຟີລິບປອຍ*

**38** *ກ. ລູກາ ຂ. ບໍ່ມີຈັກເທື່ອ*

**39** *ກ. ຢູ່ນຳ ຂ. ເພາະເຫັນຄຳວ່າ "ພວກເຮົາ"*

**40** *ກ. ຢູ່ນຳ ຂ. ເຫັນຄຳວ່າ "ພວກເຮົາ"*

**41** *ກ. ຟີລິບປອຍ ຂ. ໂລມ*
*ຄ. ບ່ອນໃດທີ່ເຮົາເຫັນຄຳວ່າ "ພວກເຮົາ" ກໍຮູ້ຢູ່ວ່າ ລູກາຢູ່ນຳ.*

**42** *ກ. ບໍ່ມີຈັກເທື່ອ ຂ. ໝໍ*

**43** *(ກິດຈະການ 1:8 ໃຫ້ກວດເບິ່ງຈາກພະຄຳພີ)*